ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄໍາມ່ວນ

ເລກທີ 11 /ສພຂ.ຄມ

ຄໍາມ່ວນ, ວັນທີ 18 ມີນາ 2024

# ມະຕິ

## ຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງຄໍາມ່ວນ ວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ ຢູ່ແຂວງຄໍາມ່ວນ.

- ອີງຕາມ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ **65/ສພຊ**, ລົງວັນທີ **10** ທັນວາ **2015**;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກໍາ (ສະບັບປັບປຸງ) ເລກທີ **06/ສພຊ**, ລົງວັນທີ **2021**;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ ສະບັບເລກທີ **61/ສພຊ**, ລົງວັນທີ **15** ກໍລະກົດ **2015**;
- ອີງຕາມ ໜັງສືສະເໜີ ຂອງເຈົ້າແຂວງ ຄໍາມ່ວນ ສະບັບເລກທີ **10/ຈຂ**, ລົງວັນທີ **17** ມັງກອນ **2024**;

ຜ່ານການຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກ ສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ **II** ກ່ຽວກັບເນື້ອໃນ ຂໍ້ຕົກລົງເຈົ້າແຂວງຄໍາມ່ວນ ວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ ຢູ່ແຂວງຄໍາມ່ວນ ໃນກອງປະຊຸມສະໄໝສາມັນເທື່ອທີ **6** ຂອງ ສະພາປະຊາຊົນແຂວງ ຄໍາມ່ວນ ຊຸດທີ **II**.

## ກອງປະຊຸມ ຕົກລົງ:

ມາດຕາ **1** ຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ຄໍາມ່ວນ ວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ ຢູ່ແຂວງຄໍາມ່ວນ.

ມາດຕາ **2** ການຈັດຕັ້ງປະຕິບັດ.

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາບັນດາພະແນກການຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈໍາ ສະພາປະຊາຊົນຂັ້ນແຂວງ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ດໍາເນີນການຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

ມາດຕາ **3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ສະພາປະຊາຊົນແຂວງຄໍາມ່ວນ

ປະທານ

ບຸນມີ ພິມມະສອນ

❖ ບ່ອນສົ່ງ:

- ທ່ານ ເຈົ້າແຂວງຄໍາມ່ວນ 1 ສະບັບ;
- ເກັບຮັກສາໄວ້ 1 ສະບັບ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຄຳມ່ວນ

ເລກທີ 627 /ຈຂ
ຄຳມ່ວນ, ລົງວັນທີ 08 ເມສາ 2024

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ ຢູ່ແຂວງຄຳມ່ວນ

- ອີງຕາມ ກົດໝາຍວ່າດ້ວຍປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ), ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021.
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ສະບັບເລກທີ 327/ລບ,ລົງວັນທີ 16 ກັນຍາ 2014;
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງຄຳມ່ວນ ຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຢູ່ແຂວງຄຳມ່ວນ ສະບັບເລກທີ 11/ສພຂ.ຄມ ລົງວັນທີ 18 ມີນາ 2024.

## ເຈົ້າແຂວງຄຳມ່ວນ ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ເຮັດໃຫ້ຕິດຕາມກວດກາ ຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິດທິຜົນ, ແນ່ໃສ່ປົກປ້ອງສິດຜົນປະໂຫຍດບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງ ຄົມພາຍໃນແຂວງ.

**ມາດຕາ 2 ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ**

ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການຕິດຕາມ, ກວດກາການເຄື່ອນໄຫວ, ຕ້ານ ແລະ ສະກັດກັ້ນການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ເປັນໄພແກ່ສັງຄົມ ແລະ ຄວາມສະຫງົບພາຍໃນແຂວງ.

ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີແມ່ນ ການເຄື່ອນໄຫວຈຳກັດ, ປາບປາມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ໂດຍກົງໃນການຊອກຮູ້ ແລະ ປະຕິບັດວຽກ

ງານຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ທີ່ໄດ້ລະບຸໄວ້ໃນມາດຕາທີ 16 ແລະ 17 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

1. **ອິນເຕີເນັດ** (Internet) ໝາຍເຖິງການເຊື່ອມຕໍ່ເຄືອຂ່າຍຄອມພິວເຕີຫຼາຍໆເຄືອຂ່າຍໃນທົ່ວໂລກເຂົ້າດ້ວຍກັນ ເພື່ອສົ່ງ-ຮັບ ແລະ ແລກປ່ຽນຂໍ້ມູນຂ່າວສານ ໂດຍຜ່ານລະບົບເຄືອຂ່າຍຜູ້ໃຫ້ບໍລິການໂທລະຄົມ;
2. **ຂໍ້ມູນຂ່າວສານ** ໝາຍເຖິງ ຂໍ້ຄວາມທີ່ເປັນຕົວເລກ, ຕົວອັກສອນ, ຮູບພາບ, ພາບເຄື່ອນໄຫວ, ສຽງ, ວິດີໂອ ແລະ ອື່ນໆ;
3. **ອາຊະຍາກຳ** ໝາຍເຖິງ ການກະທຳຜິດທີ່ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກຳນົດໂທດທາງອາຍາ;
4. **ລະບົບຄອມພິວເຕີ** ໝາຍເຖິງ ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນຄອມພິວເຕີ ທີ່ເຊື່ອມຕໍ່ລະບົບການປະຕິບັດການເຂົ້າດ້ວຍກັນ ໂດຍມີການກຳນົດຄຳສັ່ງ, ຊຸດຄຳສັ່ງ ຫຼື ສິ່ງອື່ນໆ ເພື່ອໃຫ້ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນຂອງຄອມພິວເຕີ ເຮັດໜ້າທີ່ປະມວນຜົນຂໍ້ມູນແບບອັດຕະໂນມັດໃນຄອມພິວເຕີໜຶ່ງໜ່ວຍ ແລະ ຫຼາຍໜ່ວຍທີ່ເຊື່ອມຕໍ່ຫາກັນຜ່ານເຄືອຂ່າຍຄອມພິວເຕີ ແລະ ອິນເຕີເນັດ;
5. **ຂໍ້ມູນຄອມພິວເຕີ** ໝາຍເຖິງຂໍ້ມູນ, ຂໍ້ຄວາມ, ໂປຣແກຣມ ຫຼື ລະບົບຖານຂໍ້ມູນ, ຂໍ້ມູນສ່ວນບຸກຄົນ , ຂໍ້ມູນຈາລະຈອນທາງລະບົບຄອມພິວເຕີໃນຮູບແບບທີ່ສາມາດປະມວນຜົນ ແລະ ເຮັດໃຫ້ລະບົບຄອມພິວເຕີສາມາດເຮັດວຽກໄດ້;
6. **ຂໍ້ມູນການຈາລະຈອນທາງລະບົບຄອມພິວເຕີ** ໝາຍເຖິງ ຂໍ້ມູນຄອມພິວເຕີທີ່ກ່ຽວຂ້ອງກັບການສື່ສານຜ່ານລະບົບຄອມພິວເຕີ ເຊິ່ງຖືກສ້າງຂຶ້ນໂດຍລະບົບຄອມພິວເຕີ ທີ່ເປັນສ່ວນໜຶ່ງ ໃນຕ່ອງໂສ້ຂອງການສື່ສານ ທີ່ບົ່ງບອກເຖິງ ຜູ້ສົ່ງ, ຕົ້ນທາງ, ສື່ກາງ, ເສັ້ນທາງ, ປາຍທາງ, ວັນ, ເວລາ, ຂະໜາດ, ກຳນົດເວລາຂອງການສື່ສານ, ຊະນິດການບໍລິການ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການຕິດຕໍ່ສື່ສານຂອງລະບົບຄອມພິວເຕີນັ້ນ;
7. **ລະບົບຖານຂໍ້ມູນ (Database System)** ໝາຍເຖິງ ລະບົບຂໍ້ມູນທີ່ຮັກສາໃນຮູບແບບເອເລັກໂຕຣນິກທີ່ສາມາດຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້;
8. **ໂປຣແກຣມ ( Program )** ໝາຍເຖິງ ລະບົບຄຳສັ່ງ ທີ່ລະບົບຄອມພິວເຕີສາມາດປະຕິບັດໄດ້ ເພື່ອເຮັດໃຫ້ເກີດຜົນໄດ້ຮັບຕາມທີ່ກຳນົດໄວ້;
9. **ໂປຣແກຣມປະສົງຮ້າຍ ( Malicious Code)** ໝາຍເຖິງຊຸດຄຳສັ່ງຄອມພິວເຕີ ທີ່ສ້າງຂຶ້ນເພື່ອທຳລາຍລະບົບຄອມພິວເຕີ ຫຼື ລັກຂໍ້ມູນຄອມພິວເຕີ;
10. **ສື່ສັງຄົມອອນລາຍ (Social media)** ໝາຍເຖິງ ການສື່ສານຜ່ານລະບົບອິນເຕີເນັດເພື່ອເຜີຍແຜ່ຂໍ້ມູນຂ່າວສານສູ່ສາທາລະນະ, ເຊິ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນຕໍ່ເນື້ອໃນຂໍ້ມູນຂ່າວສານເປັນຕົ້ນ: ເຟສບຸກ, ຢູທູບ, ຕິກຕ່ອກ ແລະ ອື່ນໆ;
11. **ທະບຽນສ່ວນຕົວໃນສື່ສັງຄົມອອນລາຍ** ໝາຍເຖິງ ໜ້າເວັບທີ່ໄດ້ສ້າງຂຶ້ນໂດຍຜ່ານສື່ສັງຄົມອອນລາຍ ເຊິ່ງຜູ້ລົງທະບຽນ ຫຼື ອົງການຈັດຕັ້ງ ເປັນເຈົ້າຂອງໜ້າເວັບນັ້ນ ແລະ ເປັນຜູ້ຄຸ້ມຄອງຂໍ້ມູນຂ່າວສານເອງ ເຊັ່ນ: www.facebook.com/khammouane News;
12. **ເວັບໄຊ (web site)** ໝາຍເຖິງ ລະບົບຂໍ້ມູນຂ່າວສານທີ່ສ້າງຂຶ້ນເປັນໜຶ່ງ ຫຼື ຫລາຍໜ້າເວັບ ເຊັ່ນ: www.khammouane.gov.la;
13. **ເວັບໄຊປອມ (Phishing)** ໝາຍເຖິງ ເວບໄຊທີ່ສ້າງຂຶ້ນໃໝ່ເຊິ່ງຄ້າຍຄືກັບເວບໄຊເດີມ ເພື່ອຫຼອກລວງເອົາຂໍ້ມູນຂອງຜູ້ຊົມໃຊ້;

14. **ໜ້າເວັບ (web page)** ໝາຍເຖິງກະດານຂ່າວເອເລັກໂຕຣນິກທີ່ນຳສະເໜີ ໃນຮູບແບບສັນຍາລັກ, ຕົວເລກ, ຕົວໜັງສື, ຮູບພາບ, ພາບເຄື່ອນໄຫວ, ວີດີໂອ, ສຽງ ແລະ ຮູບແບບອື່ນໆຜ່ານອິນເຕີເນັດ;
15. **ເລກໝາຍອິນເຕີເນັດ (Internet Protocol ຫຼື IP)** ໝາຍເຖິງ ເລກໝາຍລະຫັດທີ່ຢູ່ ເທິງເຄືອຂ່າຍ ຂອງລະບົບອຸປະກອນ ແລະ ຄອມພິວເຕີ ທີ່ໃຫ້ບໍລິການທາງເຄືອຂ່າຍອິນເຕີເນັດ ຊຶ່ງປະກອບດ້ວຍເລກໝາຍອິນເຕີເນັດຕາມແຕ່ລະຍຸກເປັນຕົ້ນ IPv4, IPv6;
16. **ຜູ້ຄຸ້ມຄອງເວັບໄຊ** ໝາຍເຖິງ ຜູ້ທີ່ມີສິດເຂົ້າລະບົບຢ່າງຖືກຕ້ອງເພື່ອສ້າງ, ດັດແກ້, ປັບປຸງ, ລຶບລະບົບເຕັກນິກ ແລະ ເນື້ອໃນຂອງເວັບໄຊ;
17. **ຜູ້ໃຫ້ບໍລິການອິນເຕີເນັດ** ໝາຍເຖິງ ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ ສາມາດເຊື່ອມຕໍ່ເຂົ້າຫາອິນເຕີເນັດໄດ້ ເຊັ່ນ: ບໍລິສັດ ອີທີເອລ ຈຳກັດ (ETL), ບໍລິສັດ ລາວໂທລະຄົມມະຫາຊົນ LTC, ບໍລິສັດ ສະຕາໂທລະຄົມ (STL), ບໍລິສັດ ເບສເທເລຄອມ (Best Telecom) ແລະ ບໍລິສັດ ທີພັສ (T-Plus);
18. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ບຸກຄົນ ທີ່ເຊື່ອມຕໍ່ເຂົ້າຫາອິນເຕີເນັດໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງຕໍ່ ຂໍ້ມູນຂ່າວສານຜ່ານອິນເຕີເນັດ;
19. **ຄວາມປອດໄພໃນການນຳໃຊ້ຂໍ້ມູນຂ່າວສານ** ໝາຍເຖິງການຮັກສາຂໍ້ມູນຂ່າວສານ ແລະ ລະບົບຂໍ້ມູນຂ່າວສານໃຫ້ປາສະຈາກການຖືກເຊື່ອມຕໍ່, ການນຳໃຊ້, ການທຳລາຍ ແລະ ການປອມແປງຢ່າງຜິດກົດໝາຍ;
20. **ອາຊະຍາກຳທາງລະບົບຄອມພິວເຕີ** ໝາຍເຖິງການກະທຳຜິດທາງລະບົບຄອມພິວເຕີ ທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ.

**ມາດຕາ 4 ນະໂຍບາຍກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຕ້ານ ສະກັດກັ້ນອາຊະຍະກຳທາງລະບົບຄອມພິວເຕີ.**

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ ນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດເຂົ້າໃນການເຄື່ອນໄຫວວຽກງານດ້ານເສດຖະກິດ-ສັງຄົມ ໂດຍສະເພາະໃນຂະແໜງສຶກສາ, ສາທາລະນະສຸກ, ຄົ້ນຄວ້າວິໄຈທາງວິທະຍາສາດ, ເຕັກໂນໂລຊີ ເພື່ອເພີ່ມປະສິດທິພາບ ແລະ ຄຸນນະພາບໃນການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງປະຊາຊົນພາຍໃນແຂວງ.

ລັດ ສົ່ງເສີມການນຳໃຊ້ລະບົບຄອມພິວເຕີໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຍຸດຕິທຳ ພ້ອມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການຄອມພິວເຕີ ແລະ ຂໍ້ມູນຄອມພິວເຕີຕາມກົດໝາຍ ແລະ ລະບຽບການ.

ລັດສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານ ຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ດ້ວຍການສະໜອງງົບປະມານ, ສ້າງ, ປະກອບບຸກຄະລາກອນ, ພາຫານະ, ອຸປະກອນ ກໍ່ສ້າງພື້ນຖານໂຄງລ່າງເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນ.

**ມາດຕາ 5 ຫຼັກການຄຸ້ມຄອງການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຕ້ານ ສະກັດກັ້ນອາຊະຍະກຳທາງລະບົບຄອມພິວເຕີ.**

ໃນວຽກງານການຄຸ້ມຄອງການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຕ້ານ ສະກັດກັ້ນອາຊະຍະກຳທາງລະບົບຄອມພິວເຕີ ຕ້ອງຮັບປະກັນຫຼັກການດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
2. ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

3. ການຮັກສາຄວາມລັບຂອງຊາດ, ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຄວາມເປັນເອກະພາບ, ປອດໄພ, ສະດວກ, ວ່ອງໄວ ແລະ ຍຸຕິທຳ;
5. ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດ້ວຍການຕອບຕ້ານ ການສວຍໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ທີ່ກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ວຽກງານດັ່ງກ່າວ;
6. ການປົກປ້ອງສິດ ຜົນປະໂຫຍດອັບຊອບທຳຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການລະບົບຄອມພິວເຕີ ອິນເຕີເນັດ ຕາມກົດໝາຍ ແລະ ລະບຽບການ;
7. ການມີສ່ວນຮ່ວມຂອງສັງຄົມ;
8. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງຄໍາມ່ວນ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ສຳລັບ ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ໃຊ້ບໍລິການອິນເຕີເນັດ, ລະບົບຄອມພິວເຕີ ແລະ ຂໍ້ມູນຄອມພິວເຕີ ຢູ່ແຂວງຄໍາມ່ວນ.

## ໝວດທີ 2
## ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດຢູ່ແຂວງຄໍາມ່ວນ

**ມາດຕາ 7 ການສ້າງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຈະສ້າງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ ຕ້ອງສະແດງຕົວຕົນ, ລະບຸຊື່ນາມສະກຸນ, ເບີໂທລະສັບທີ່ລົງທະບຽນ, ທີ່ຢູ່ປະຈຸບັນ, ຂໍ້ມູນການພົວພັນປະສານງານຢ່າງຖືກຕ້ອງ ແລະ ອື່ນໆ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງຜູ້ສ້າງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ**

ສິດ ແລະ ໜ້າທີ່ຂອງການສ້າງທະບຽນສ່ວນຕົວໃນສື່ສັງຄົມອອນລາຍມີດັ່ງນີ້:
1. ຮັບຜິດຊອບຕໍ່ນ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນຂ່າວສານທີ່ຕົນນຳສະເໜີ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ຜ່ານເວັບໄຊ, ສື່ສັງຄົມອອນລາຍ ຫຼື ຮູບການຜ່ານທີ່ຜ່ານອິນເຕີເນັດ;
2. ຮັບປະກັນຄວາມປອດໄພຂອງຂໍ້ມູນຂ່າວສານສ່ວນຕົວຂອງຕົນ;
3. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 9 ການຂຶ້ນບັນຊີການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຈະສ້າງທະບຽນສ່ວນຕົວໃນສື່ສັງຄົມອອນລາຍເປັນຕົ້ນເຊັ່ນ: ການສ້າງຕັ້ງເວັບໄຊ, ໜ້າຂ່າວອອນລາຍ (Web page) ເພື່ອນຳໃຊ້ ແລະ ບໍລິການເພື່ອສັງຄົມ ຕ້ອງໄດ້ແຈ້ງຈຸດປະສົງຂໍອະນຸຍາດເຄື່ອນໄຫວການນຳໃຊ້ຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ຂະແໜງການພາກສ່ວນທີ່ກ່ຽວຂ້ອງໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 10 ການຕິດຕາມກວດກາຂໍ້ມູນຂ່າວສານອິນເຕີເນັດ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງປະສານສົມທົບກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກສຶກສາທິການ ແລະ ກິລາ ແລະ ຂະແໜງການພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ ໃນການຕິດຕາມກວດກາ ເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ພ້ອມທັງສະກັດກັ້ນ, ຈຳກັດ ແລະ ຕອບໂຕ້ ອາຊະຍາກຳທາງລະບົບຄອມພິວເຕີ ທີ່ສ້າງ

ຄວາມເສຍຫາຍໃຫ້ແກ່ລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ຕາມພຶດຕິກຳທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍ.

## ໝວດທີ 3
## ການເຜີຍແຜ່ຂໍ້ມູນຂ່າວສານທີ່ເຜີຍແຜ່ຜ່ານອິນເຕີເນັດ

**ມາດຕາ 11 ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນການນຳເອົາຂໍ້ຄວາມ, ຮູບພາບ, ພາບເຄື່ອນໄຫວ, ສຽງ, ວີດີໂອ ເຂົ້າສູ່ໜ້າເວັບໄຊ ເພື່ອສະເໜີມີຄຳເຫັນ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ໃຫ້ແກ່ໜຶ່ງ ຫຼື ຫຼາຍຄົນ .

**ມາດຕາ 12 ລະບຽບການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ສາມາດເຜີຍແຜ່ຂໍ້ມູນຂ່າວສານຜ່ານສື່ສັງຄົມອອນລາຍ ແຕ່ຕ້ອງລະບຸແຫຼ່ງທີ່ມາ ຂອງຂໍ້ມູນຂ່າວສານຢ່າງຖືກຕ້ອງ;

ຜູ້ຄຸ້ມຄອງເວັບໄຊ ແລະ ເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມອອນລາຍ ຕ້ອງກວດກາເນື້ອໃນຂໍ້ມູນຂ່າວສານກ່ອນເຜີຍແຜ່ໃນໜ້າເວັບຂອງຕົນ;

ຂໍ້ມູນຂ່າວສານທີ່ບໍ່ເປັນທາງການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນບໍ່ສາມາດໃຊ້ທາງການໄດ້;

ເຈົ້າຂອງ ຫຼື ຜູ້ຄຸ້ມຄອງເວັບໄຊ ຕ້ອງມີຄວາມຮັບຜິດຊອບໃນການກວດກາເນື້ອໃນ, ຂໍ້ມູນຂ່າວສານຢ່າງລະອຽດກ່ອນ ຈະອະນຸຍາດໃຫ້ຜູ້ອື່ນ ເຜີຍແຜ່ຜ່ານເວັບໄຊ, ເວບເພດອອນລາຍຕ່າງໆຂອງຕົນ.

**ມາດຕາ 13 ເນື້ອໃນທີ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ**

ເນື້ອໃນຂໍ້ມູນຂ່າວສານ ທີ່ໄດ້ຮັບອະນຸຍາດໃຫ້ເຜີຍແຜ່ ແມ່ນເນື້ອໃນທີ່ມີລັກສະນະສ້າງສັນ, ໃຫ້ຄວາມຮູ້, ເປັນປະໂຫຍດທາງສັງຄົມ ແລະ ເນື້ອໃນອື່ນໆ ທີ່ບໍ່ຂັດກັບກົດໝາຍ, ລະບຽບການ ແລະຂໍ້ຕົກລົງສະບັບນີ້.

**ມາດຕາ 14 ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ**

ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດມີດັ່ງນີ້:

1. ຕົວະຍົວະ, ຫຼອກລວງ ແລະ ຊວນເຊື່ອປະຊາຊົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຕໍ່ຕ້ານພັກປະຊາຊົນປະຕິວັດລາວ, ລັດຖະບານແຫ່ງ ສປປ ລາວ ຫຼື ມ້າງເພສັນຕິພາບ, ຄວາມເປັນເອກະລາດ , ອະທິປະໄຕ, ຄວາມເປັນເອກະພາບ ແລະ ຄວາມວັດທະນາຖາວອນ ຂອງ ສປປ ລາວ;
2. ຍຸຍົງ ແລະ ສົ່ງເສີມ ການເຄື່ອນໄຫວທີ່ເປັນການກໍ່ການຮ້າຍ, ຄາດຕະກຳ ແລະ ປັ່ນປ່ວນຕໍ່ສັງຄົມ;
3. ໂຄສະນາ ບິດເບືອນ ແລະ ປ່າວຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກລະຫວ່າງຊົນເຜົ່າ ຫຼື ລະຫວ່າງຊາດ;
4. ເຜີຍແຜ່ຮູບພາບລາມົກ, ຮູບພາບຕັດຕໍ່ ແລະ ຮູບພາບອື່ນໆ ທີ່ກົດໝາຍ ສປປ ລາວ ເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ, ແຕະຕ້ອງເຖິງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ຊື້ຂາຍບໍລິການທາງເພດ;
5. ເຜີຍແຜ່ຄວາມລັບຂອງຊາດ, ທາງການທະຫານ ຫຼື ຄວາມລັບດ້ານອື່ນ ທີ່ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ;
6. ເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງເພື່ອຈຸດປະສົງສ້າງຄວາມເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນ;
7. ນຳໃຊ້ຊື່ຂອງບຸກຄົນ ຫຼື ການຈັດຕັ້ງ, ຮູບພາບ, ພາບເຄື່ອນໄຫວ, ສຽງ, ວີດີໂອ, ລາຍເຊັນ, ລະຫັດຕ່າງໆ, ບັດສິນເຊື່ອທະນາຄານ ຫຼື ເອກະສານສ່ວນຕົວຂອງບຸກຄົນອື່ນ ເພື່ອຜົນປະໂຫຍດ ຫຼື ເພື່ອຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ເປັນເຈົ້າຂອງ;
8. ການກະທຳອື່ນໆ ທີ່ລະເມີດຕໍ່ລະບຽບກົດໝາຍ.

## ໝວດທີ 4
## ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຢູ່ແຂວງຄຳມ່ວນ

**ມາດຕາ 15 ການຕ້ານອາຊະຍາກຳທາງລະບົບຄອມພິວເຕີ**

ການຕ້ານອາຊະຍາກຳທາງລະບົບຄອມພິວເຕີ ແມ່ນການວາງມາດຕະການຕ່າງໆ ເພື່ອບໍ່ໃຫ້ມີການກະທຳຜິດທາງລະບົບຄອມພິວເຕີ ຊຶ່ງປະກອບມີ:

**1. ການແຈ້ງເຕືອນ**

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເປັນຜູ້ແຈ້ງໄພອັນຕະລາຍທີ່ເກີດຂຶ້ນໃນລະບົບຄອມພິວເຕີ ແລະ ອິນເຕີເນັດ ຢູ່ແຂວງຄຳມ່ວນ ເປັນຕົ້ນການແຈ້ງເຕືອນເວັບໄຊປອມ, ໂປແກຣມປະສົງຮ້າຍ, ການຕົວະຍົວະທາງຈົດໝາຍເອເລັກໂຕຣນິກ ແລະ ອື່ນໆ.

ຜູ້ໃຫ້ບໍລິການລະບົບຄອມພິວເຕີ ຕ້ອງແຈ້ງເຕືອນ ແລະ ກຳນົດເງື່ອນໄຂ ໃນການເຂົ້າຫາລະບົບຄອມພິວເຕີເພື່ອຈຳກັດ ຫຼື ບໍ່ອະນຸຍາດໃຫ້ຜູ້ໃຊ້ບໍລິການບາງປະເພດເຂົ້າຫາລະບົບຄອມພິວເຕີໄດ້

**2. ການໃຫ້ຄຳປຶກສາ**

ພະແນກເຕັກໂນໂລຊີ ແລະ ກນສື່ສານ ແຂວງ ເປັນຜູ້ໃຫ້ຄຳປຶກສາ ແລະ ວິທີການປ້ອງກັນ ການແກ້ໄຂທາງດ້ານເຕັກນິກ ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ແຂວງຄຳມ່ວນ ເພື່ອຫຼຸດຜ່ອນການສູນເສຍຂໍ້ມູນ, ການລັບກອບຂໍ້ມູນ, ບໍ່ໃຫ້ມີການຢຸດຕິການທຳງານຂອງລະບົບຄອມພິວເຕີ, ການສະກັດກັ້ນ ການກະຈາຍໄວຣັດຄອມພິວເຕີ ແລະ ການເຂົ້າທຳລາຍຂໍ້ມູນໃນລະບົບຄອມພິວເຕີ.

**3. ການແຈ້ງເຫດສຸກເສີນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ນຳໃຊ້ລະບົບຄອມພິວເຕີ ຫຼື ຂໍ້ມູນຄອມພິວເຕີ ຢູ່ແຂວງຄຳມ່ວນ ຕ້ອງແຈ້ງເຫດສຸກເສີນກ່ຽວກັບອາຊະຍາກຳທີ່ເກີດຂຶ້ນແກ່ລະບົບຄອມພິວເຕີຂອງຕົນ ຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.

**4. ການດຳເນີນການແກ້ໄຂ**

ພາຍຫຼັງໄດ້ຮັບແຈ້ງເຫດສຸກເສີນທາງລະບົບຄອມພິວເຕີແລ້ວ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຕ້ອງໄດ້ຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບພ້ອມທັງແນະນຳວິທີແກ້ໄຂພາຍໃນກຳນົດເວລາ 05 ວັນລັດຖະການ;

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຕ້ອງໄດ້ປະສານຫາກະຊວງ ດຳເນີນການແກ້ໄຂເຕັກນິກວິຊາການ ຕາມການແຈ້ງເຫດຂອງຜູ້ກ່ຽວຂ້ອງຢ່າງທັນການ;

ໃນກໍລະນີໄດ້ຮັບການແຈ້ງເຫດ ກ່ຽວກັບພຶດຕິກຳ ທີ່ກຳນົດໄວ້ໃນມາດຕາ 18 ຂໍ້3 ແລະ ຂໍ້5 ຂອງຂໍ້ຕົກລົງສະບັບນີ້ ເຊິ່ງແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ ຫຼື ກຽດສັກສີຂອງບຸກຄົນໃດໜຶ່ງນັ້ນ ຂະແໜງການກ່ຽວຂ້ອງພາຍໃນທ້ອງຖິ່ນຕ້ອງໄດ້ຄົ້ນຄວ້າພິຈາລະນາຕອບໂຕ້ຕາມແຕ່ລະກໍລະນີ.

**ມາດຕາ 16 ການສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ**

ການສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີປະກອບມີ:

**1. ການຈັດຕັ້ງໂຄສະນາເຜີຍແຜ່**

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ນຳເອົາຄູ່ມື, ສະຕິກເກີ, ແຜ່ນໂຄສະນາ ສິ່ງພິມ ແລະ ວິດີໂອ ທີ່ກ່ຽວກັບການເຝົ້າລະວັງ, ປ້ອງກັນໄພທາງລະບົບຄອມພິວເຕີ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານສ້າງຂຶ້ນ ໄປປະສານສົມທົບກັບຂະແໜງການກ່ຽວຂ້ອງ ໂຄສະນາເຜີຍແຜ່ຢູ່ພາຍໃນແຂວງ.

**2. ການຝຶກອົບຮົມ**

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນແຂວງ ຈັດຝຶກອົບຮົມໃຫ້ແກ່ພະນັກງານ, ເຈົ້າໜ້າທີ່ກ່ຽວຂ້ອງ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ.

**3. ການໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພທາງລະບົບຄອມພິວເຕີ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງພາຍໃນແຂວງ ນໍາເອົາການກໍານົດມາດຕະການສະເພາະໃນການຮັກສາຄວາມປອດໄພທາງລະບົບຄອມພິວເຕີທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກໍານົດອອກ ມາໃຫ້ຄວາມຮູ້ກ່ຽວກັບມາດຕະການດັ່ງກ່າວຢູ່ພາຍໃນແຂວງ.

4. **ການສ້າງກິດຈະກໍາປ້ອງກັນຂໍ້ມູນ**

ເພື່ອຮັບປະກັນຄວາມປອດໄພທາງລະບົບຄອມພິວເຕີ ແລະ ການປ້ອງກັນຂໍ້ມູນຄອມພິວເຕີຢູ່ພາຍໃນແຂວງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ, ຜູ້ໃຫ້ບໍລິການ ແລະ ຜູ້ຮັກສາຂໍ້ມູນ ຕ້ອງສ້າງກິດຈະກໍາໃຫ້ຄວາມຮູ້ດ້ານຄວາມປອດໄພ, ການນໍາໃຊ້ລະບົບຄອມພິວເຕີ ເພື່ອໃຫ້ຮູ້ເຕັກນິກ ແລະ ວິທີປ້ອງກັນຂໍ້ມູນ ຢູ່ຕາມອົງການຈັດຕັ້ງຂອງລັດ ເອກະຊົນ ແລະ ສະຖາບັນການສຶກສາຢູ່ຂອບເຂດພາຍໃນແຂວງ.

5. **ການເຝົ້າລະວັງເຫດສຸກເສີນ.**

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເປັນຜູ້ເຝົ້າລະວັງເຫດສຸກເສີນ ຢູ່ພາຍໃນແຂວງ ດ້ວຍການຕິດຕາມ, ກວດກາ, ແນະນໍາ, ແຈ້ງເຕືອນ, ປ້ອງກັນ ແລະ ຕອບໂຕ້ໄພອັນຕະລາຍທີ່ເກີດຂຶ້ນທາງລະບົບຄອມພິວເຕີ.

6. **ການເກັບກໍາສະຖິຕິ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຕ້ອງເກັບກໍາສະຖິຕິ ແລະ ສ້າງຖານຂໍ້ມູນ ກ່ຽວກັບອາຊະຍາກໍາທາງລະບົບຄອມພິວເຕີ ຢູ່ພາຍໃນແຂວງ, ພ້ອມທັງສຶກສາຄົ້ນຄວ້າເປັນແຕ່ລະໄລຍະ ເພື່ອຊອກຮູ້ເງື່ອນໄຂ ແລະ ສາເຫດທີ່ພາໃຫ້ເກີດອາຊະຍາກໍາທາງລະບົບຄອມພິວເຕີ.

**ມາດຕາ 17 ຄວາມປອດໄພໃນການນໍາໃຊ້ຂໍ້ມູນຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຮັກສາ ແລະ ປ່ຽນລະຫັດຜ່ານເລື້ອຍໆ ເພື່ອຮັບປະກັນຄວາມປອດໄພ ໃນການນໍາໃຊ້ຂໍ້ມູນສ່ວນຕົວ ທັງເປັນການບໍ່ສ້າງເງື່ອນໄຂໃຫ້ບຸກຄົນອື່ນ ສວຍໃຊ້ທາງລະບຽບກົດໝາຍ.

## ໝວດທີ 5
## ການສ້າງຄວາມເສຍຫາຍຜ່ານລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ

**ມາດຕາ 18 ພຶດຕິກໍາທີ່ເປັນອາຊະຍາກໍາທາງລະບົບຄອມພິວເຕີ**

ພຶດຕິກໍາທີ່ເປັນອາຊະຍາກໍາທາງລະບົບຄອມພິວເຕີປະກອບມີ :

1. **ການເປີດເຜີຍມາດຕະການປ້ອງກັນການເຂົ້າເຖິງລະບົບຄອມພິວເຕີ**

ການເປີດເຜີຍມາດຕະການປ້ອງກັນການເຂົ້າເຖິງລະບົບຄອມພິວເຕີ ແມ່ນການນໍາເອົາມາດຕະການປ້ອງກັນສະເພາະໄປເປີດເຜີຍໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ: ລະຫັດຜ່ານ, ຊ່ອງໂຫວ່, ວິທີການເຈາະລະບົບ ແລະ ວິທີການໂຈມຕີລະບົບຄອມພິວເຕີຂອງອົງກອນໃດໜຶ່ງ ໄປເປີດເຜີຍຕໍ່ບຸກຄົນອື່ນ ຊຶ່ງໄດ້ເຮັດໃຫ້ລະບົບຄອມພິວເຕີ ເກີດຄວາມເສຍຫາຍ ໃຫ້ແກ່ລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ.

2. **ການເຂົ້າເຖິງລະບົບຄອມພິວເຕີໂດຍບໍ່ໄດ້ຮັບອະນຸຍາດ**

ການເຂົ້າເຖິງລະບົບຄອມພິວເຕີ ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນການນໍາໃຊ້ອຸປະກອນເອເລັກໂຕຣນິກເຂົ້າໃນລະບົບຄອມພິວເຕີທີ່ມີມາດຕະການປ້ອງກັນສະເພາະ ຫຼື ເພື່ອລັກເອົາຂໍ້ມູນ, ປອມແປງຂໍ້ມູນ,

ປ່ຽນແປງຂໍ້ມູນ, ຂໍ້ມູນດ້ານການຄ້າ, ດ້ານການເງິນ, ຂໍ້ມູນທີ່ເປັນຄວາມລັບ ແລະ ຂໍ້ມູນອື່ນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ.

**3. ການຕັດຕໍ່ເນື້ອໃນ, ຮູບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອໂດຍບໍ່ໄດ້ຮັບອະນຸຍາດ.**

ການຕັດຕໍ່ເນື້ອໃນ, ຮູບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອໂດຍບໍ່ໄດ້ຮັບອະນຸຍາດແມ່ນການສ້າງຂຶ້ນໃໝ່ເພີ່ມເຕີມ ຫຼື ການດັດແປງຈາກຕົ້ນສະບັບດ້ວຍວິທີທາງເອເລັກໂຕຣນິກ ຫຼື ວິທີອື່ນ ເພື່ອເຜີຍແຜ່ທາງລະບົບຄອມພິວເຕີ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

**4. ການລັກເອົາຂໍ້ມູນໃນລະບົບຄອມພິວເຕີໂດຍບໍ່ໄດ້ຮັບອະນຸຍາດ**

ການລັກເອົາຂໍ້ມູນໃນລະບົບຄອມພິວເຕີໂດຍບໍ່ໄດ້ຮັບອະນຸຍາດ ແມ່ນການດັກເອົາຂໍ້ມູນທີ່ກໍາລັງຮັບ ຫຼື ສົ່ງຜ່ານລະບົບຄອມພິວເຕີ ດ້ວຍການນໍາໃຊ້ເຄື່ອງມືທາງເອເລັກໂຕຣນິກ.

**5. ການສ້າງຄວາມເສຍຫາຍຜ່ານສື່ສັງຄົມອອນລາຍ**

ການສ້າງຄວາມເສຍຫາຍຜ່ານສື່ສັງຄົມອອນລາຍ ສະແດງອອກດ້ວຍການກະທໍາດັ່ງນີ້:

- ການນໍາເອົາຂໍ້ມູນຄອມພິວເຕີ ທີ່ມີລັກສະນະໃສ່ຮ້າຍປ້າຍສີ, ໝິ່ນປະມາດ, ໃຊ້ຄໍາສັບບໍ່ສຸພາບເຂົ້າສູ່ລະບົບຄອມພິວເຕີ;
- ການນໍາເອົາຂໍ້ມູນທີ່ມີລັກສະນະໃຊ້ຄວາມຮຸນແຮງ, ຂໍ້ມູນຫຼອກລວງ, ຂໍ້ມູນບໍ່ເປັນຄວາມຈິງ ເຂົ້າສູ່ລະບົບຄອມພິວເຕີ;
- ການນໍາເອົາຂໍ້ມູນຄອມພິວເຕີ ທີ່ເປັນການທໍາລາຍຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທໍາ ແລະ ຮີດຄອງອັນດີງາມຂອງຊາດ;
- ການນໍາເອົາຂໍ້ມູນຄອມພິວເຕີທີ່ມີລັກສະນະຊວນເຊື່ອ, ຍຸຍົງ ແລະ ສົ່ງເສີມປະຊາຊົນຕໍ່ຕ້ານລັດຖະບານ ຫຼື ແບ່ງແຍກຄວາມສາມັກຄີ;
- ການໂຄສະນາຄ້າຂາຍຢາເສບຕິດ, ອາວຸດເສິກ, ອາວຸດເຄມີ, ຄ້າມະນຸດ, ຄ້າປະເວນີ, ຄ້າໂສເພນີ ແລະ ສິ່ງທີ່ ຜິດກົດໝາຍ.

**6. ການເຜີຍແຜ່ສິ່ງລາມົກຜ່ານລະບົບຄອມພິວເຕີ**

ສິ່ງລາມົກ ແມ່ນຂໍ້ມູນທີ່ມີເນື້ອໃນສະແດງອອກຢ່າງຈະແຈ້ງ ເປັນຕົ້ນຮູບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອ ກ່ຽວກັບອະໄວຍະວະເພດ ແລະ ພຶດຕິກໍາທາງເພດຂອງຄົນ.

**7. ການລົບກວນລະບົບຄອມພິວເຕີ**

ການລົບກວນລະບົບຄອມພິວເຕີ ແມ່ນການກະທໍາດັ່ງນີ້:

– ການນໍາໃຊ້ໂປຣແກຣມຄອມພິວເຕີ, ໄວຣັດ ຫຼື ເຄື່ອງມືອື່ນ ເພື່ອຂັດຂວາງ ຫຼື ທໍາລາຍການປະຕິບັດງານຂອງລະບົບຄອມພິວເຕີ ເຊັ່ນ: ການໂຈມຕີລະບົບຄອມພິວເຕີຂອງອົງກອນໃດໜຶ່ງ ດ້ວຍວິທີການສົ່ງຂໍ້ມູນທີ່ມີຈໍານວນຫຼາຍ ເຂົ້າໄປຂັດຂວາງ ຫຼື ເຮັດໃຫ້ການປະຕິບັດງານຂອງລະບົບຄອມພິວເຕີ ທໍາງານບໍ່ເປັນປົກກະຕິ ຫຼື ບໍ່ສາມາດນໍາໃຊ້ໄດ້ ຫຼື ການໂຈມຕີດ້ວຍການນໍາໃຊ້ເມົາແວ ເພື່ອລຶບ ແລະ ທໍາລາຍຟາຍຂໍ້ມູນສໍາຄັນຕ່າງໆ ໃນລະບົບຄອມພິວເຕີ ເຮັດໃຫ້ອົງກອນດັ່ງກ່າວເກີດຄວາມເສຍຫາຍຕໍ່ລະບົບຄອມພິວເຕີ.

– ການສົ່ງຂໍ້ມູນລະບົບຄອມພິວເຕີ ຫຼື ຈົດໝາຍເອເລັກໂຕຣນິກ ໂດຍມີການປົກປິດທີ່ຢູ່ ຫຼື ແຫຼ່ງທີ່ມາຂອງຜູ້ສົ່ງເພື່ອລົບກວນ ຫຼື ທໍາລາຍການປະຕິບັດງານຂອງລະບົບຄອມພິວເຕີ ເຊິ່ງມີການປອມໝາຍເລກທີ່ຢູ່ທາງອິນເຕີເນັດ (IP Address) ແລະ ສົ່ງ E-Mail ໂດຍປົກປິດແຫຼ່ງທີ່ມາ ຊຶ່ງເຮັດໃຫ້ລົບກວນການປະຕິບັດງານລະບົບຄອມພິວເຕີ ເຮັດໃຫ້ບໍ່ສາມາດນໍາໃຊ້ໄດ້ເປັນປົກກະຕິ.

**8. ການປອມແປງຂໍ້ມູນຄອມພິວເຕີ**

ການປອມແປງຂໍ້ມູນຄອມພິວເຕີ ແມ່ນການໃຊ້ຄອມພິວເຕີ ຫຼື ລະບົບຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກ ເພື່ອປ່ຽນແປງຂໍ້ມູນຄອມພິວເຕີ ດ້ວຍການກະທໍາດັ່ງນີ້:

– ການປ້ອນຂໍ້ມູນ, ການປ່ຽນແປງຂໍ້ມູນ, ການປອມທີ່ຢູ່ທາງເອເລັກໂຕຣນິກ ຫຼື ການລຶບຂໍ້ມູນທາງລະບົບຄອມພິວເຕີໃດໜຶ່ງ ປ່ຽນແປງຈາກຂໍ້ມູນເດີມ ໂດຍເຈດຕະນາ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;

– ການສ້າງເວັບໄຊປອມເພື່ອຫຼອກລວງ ເຮັດໃຫ້ຜູ້ນຳໃຊ້ລະບົບຄອມພິວເຕີ ຫຼື ຜູ້ໃຊ້ອິນເຕີເນັດ ປ້ອນຂໍ້ມູນບັນຊີເງິນຝາກ, ລະຫັດບັດເຄຣດິດ, ລະຫັດນຳໃຊ້ອິນເຕີເນັດ ແລະ ຂໍ້ມູນອື່ນ.

**9. ການທຳລາຍຂໍ້ມູນຄອມພິວເຕີ**

ການທຳລາຍຂໍ້ມູນຄອມພິວເຕີ ແມ່ນການລຶບ ແລະ ການດັດແກ້ ຫຼື ປ່ຽນແປງຂໍ້ມູນຄອມພິວເຕີ ຫຼື ຂໍ້ມູນໃນລະບົບຄອມພິວເຕີ ເພື່ອເຮັດໃຫ້ຂໍ້ມູນ ຫຼືລະບົບຄອມພິວເຕີນັ້ນເສຍຫາຍ ແລະ ຜິດແປກຈາກຂໍ້ມູນເດີມ.

**10. ການດຳເນີນກິດຈະການ ກ່ຽວກັບເຄື່ອງມືອາຊະຍາກຳທາງລະບົບຄອມພິວເຕີ.**

ການດຳເນີນກິດຈະການກ່ຽວກັບເຄື່ອງມືອາຊະຍາກຳທາງລະບົບຄອມພິວເຕີ ແມ່ນເພື່ອການສ້າງໂປຣແກຣມໃໝ່ສະເພາະ, ການຜະລິດ, ການນຳເຂົ້າ, ການມີໄວ້ໃນຄອບຄອງ, ການຊື້ຂາຍ, ການຈຳໜ່າຍ, ການໂຄສະນາ ເຜີຍແຜ່ຫຼືແນະນຳ ເຄື່ອງມືດັ່ງກ່າວເປັນຕົ້ນໂປຣແກຣມຄອມພິວເຕີ ຫຼືການອອກແບບຂໍ້ມູນຄອມພິວເຕີ ເພື່ອກໍ່ອາຊະຍາກຳທາງລະບົບຄອມພິວເຕີ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 19 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ມີພຶດຕິກຳທີ່ກຳນົດໄວ້ໃນມາດຕາທີ່ 18 ຂອງຂໍ້ຕົກລົງສະບັບນີ້;
2. ໂຄສະນາທຳລາຍລະບອບການເມືອງ ເພື່ອສ້າງຄວາມປັ່ນປ່ວນໃນສັງຄົມ;
3. ທຳລາຍ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ອຸປະກອນເອເລັກໂຕຣນິກ, ຄອມພິວເຕີ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃນການແລກປ່ຽນຂໍ້ມູນຂ່າວສານຜ່ານລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ;
4. ສົມຮູ້ຮ່ວມຄິດກັບບຸກຄົນໃດໜຶ່ງ ເພື່ອເຜີຍແຜ່ສິ່ງລາມົກ ໂດຍຜ່ານສື່ສັງຄົມອອນລາຍ;
5. ມີພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 20 ຂໍ້ຫ້າມສຳລັບບໍລິສັດທີ່ໃຫ້ບໍລິການອິນເຕີເນັດ

ຫ້າມຜູ້ໃຫ້ບໍລິການ ມີພຶດຕິກຳດັ່ງນີ້:

1. ເຜີຍແຜ່ຂໍ້ມູນຂອງຜູ້ໃຊ້ບໍລິການໂດຍບໍ່ໄດ້ຮັບອານຸຍາດ;
2. ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີການເຄື່ອນໄຫວກໍ່ອາຊະຍາກຳທາງລະບົບຄອມພິວເຕີ, ທຳລາຍແນວທາງນະໂຍບາຍຂອງພັກ-ລັດ ແລະ ກະທົບເຖິງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ໃຫ້ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;
4. ລຶບຂໍ້ມູນຜູ້ຊົມໃຊ້ລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ ທີ່ສ້າງຄວາມເສຍຫາຍ ກ່ອນເກົ້າສິບວັນ;
5. ມີພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 21 ຂໍ້ຫ້າມຜູ້ໃຊ້ບໍລິການອິນເຕີເນັດ ແລະ ຜູ້ຄຸ້ມຄອງເວັບໄຊ

ຫ້າມຜູ້ໃຊ້ບໍລິການອິນເຕີເນັດ ມີພຶດຕິກຳດັ່ງນີ້:

1. ນຳສະເໜີ, ສົ່ງ ແລະ ສົ່ງຕໍ່ ຂໍ້ມູນຂ່າວສານ ທີ່ມີເນື້ອໃນຕາມທີ່ກຳນົດໄວ້ໃນ ມາດຕາທີ 15 ຂອງຂໍ້ຕົກລົງສະບັບນີ້ດ້ວຍທຸກຮູບການ;

2. ປະກອບຄຳເຫັນທີ່ເປັນການສະໜັບສະໜູນ ຕໍ່ເນື້ອໃນຂໍ້ມູນຂ່າວສານ ຕາມທີ່ກຳນົດໄວ້ໃນມາດຕາທີ່ 15 ຂອງຂໍ້ຕົກລົງສະບັບນີ້;
3. ມີພຶດຕິກຳອື່ນໆທີ່ລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 22 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ**

1. ເປີດເຜີຍຄວາມລັບຂອງລັດ ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຜ່ານລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ;
2. ເປີດເຜີຍລະຫັດເຂົ້າເຖິງລະບົບຄອມພິວເຕີ ແລະ ມາດຕະການປ້ອງກັນສະເພາະຂອງຂະແໜງການຕົນ;
3. ສົ່ງມອບຂໍ້ມູນຄອມພິວເຕີ, ຂໍ້ມູນການຈາລະຈອນທາງລະບົບຄອມພິວເຕີ ແລະ ອິນເຕີເນັດ ຫຼື ຂໍ້ມູນຂອງຜູ້ໃຊ້ບໍລິການໃຫ້ແກ່ບຸກຄົນອື່ນ ຍົກເວັ້ນການສົ່ງມອບ ເພື່ອປະໂຫຍດໃນການດຳເນີນຄະດີ ເຊັ່ນການປະຕິບັດຄຳສັ່ງ ຫຼື ກໍລະນີໄດ້ຮັບອານຸຍາດຈາກອົງການດຳເນີນຄະດີ;
4. ກົດໜ່ວງ ຖ່ວງດຶງ ແລະ ປອມແປງເອກະສານ ກ່ຽວກັບຂໍ້ມູນທີ່ເປັນການກະທຳຜິດທາງລະບົບຄອມພິວເຕີ;
5. ສວຍໃຊ້ໜ້າທີ່ ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນໂຕ, ຄອບຄົວ ແລະ ພັກພວກ;
6. ປະລະໜ້າທີ່ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;
7. ມີພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການຄຸ້ມຄອງ ແລະ ກວດກາ

**ມາດຕາ 23 ອົງການຄຸ້ມຄອງ**

ອົງການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ພາຍໃນແຂວງ ມີດັ່ງນີ້:

1. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ;
2. ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວແຂວງ;
3. ກອງບັນຊາການປ້ອງກັນຄວາມສະຫງົບແຂວງ;
4. ພະແນກສຶກສາທິການ ແລະ ກິລາແຂວງ;
5. ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ**

ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ພະແນກເຕັກໂນໂລຊີ ແລະ ການສື່ສານມີຄວາມຮັບຜິດຊອບດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ຂໍ້ມູນຂ່າວສານຜ່ານອິນເຕີເນັດ;
2. ຮັບ ແລະ ພິຈາລະນາການສະເໜີ ຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການອິນເຕີເນັດ ແລະ ສັງຄົມທົ່ວໄປກ່ຽວກັບການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ;
3. ສະເໜີກະຊວງ ຕສ ອອກຄຳສັ່ງໃຫ້ບັນດາຜູ້ໃຫ້ບໍລິການອິນເຕີເນັດລະງັບການເຂົ້າເຖິງຂໍ້ມູນຂ່າວສານອິນເຕີເນັດ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານຕໍ່ຜູ້ໃຊ້ບໍລິການທີ່ລະເມີດຕໍ່ລະບຽບກົດໝາຍ;
4. ຮັບແຈ້ງເຫດສຸກເສີນ ທາງລະບົບຄອມພິວເຕີ ແລ້ວລາຍງານຕໍ່ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງລະບົບຄອມພິວເຕີ;

5. ແຈ້ງຄວາມ, ລາຍງານການກະທຳຜິດທາງລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ ຕໍ່ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນແຂວງ ໃນການດຳເນີນຄະດີ;
6. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບຂະແໜງການພາກສ່ວນທີ່ກ່ຽວຂ້ອງໃນການຕິດຕາມຊອກຫາຜູ້ກະທຳຜິດທາງດ້ານລະບົບຄອມພິວເຕີ, ການເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນການລະເມີດກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
7. ຄຸ້ມຄອງຕິດຕາມກວດກາ, ຄົ້ນຄ້ວາຊອກຫາຂໍ້ມູນຂ່າວສານຜ່ານອິນເຕີເນັດເພື່ອຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ລາຍງານ, ສະໜອງຂໍ້ມູນໃຫ້ກອງບັນຊາການ ປກສ ແຂວງ, ເມືອງ ຫຼື ພາກສ່ວນທີ່ກ່ຽວຂ້ອງເພື່ອດຳເນີນຄະດີຕາມລະບຽບການ.
8. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ**

ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວຮັບຜິດຊອບດັ່ງນີ້:

1. ຕິດຕາມ, ກວດກາ, ໄຈ້ແຍກ ແລະ ວິເຄາະເນື້ອໃນຂໍ້ມູນຂ່າວສານຜ່ານ ອິນເຕີເນັດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ, ຕອບໂຕ້, ຕອບຕ້ານ, ຖະແຫຼງ ແລະ ເຜີຍແຜ່ຂ່າວສານຢ່າງເປັນທາງການ ເພື່ອຊີ້ແຈງກ່ຽວກັບຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ;
3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງແຫຼ່ງຂໍ້ມູນຂ່າວສານ ທີ່ກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
4. ຕິດຕາມກວດກາ, ເກັບກຳຂໍ້ມູນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ສ້າງໜ້າຂ່າວອອນລາຍຜ່ານພາຫະນະສື່ອອນລາຍປະເພດຕ່າງໆ ບໍລິການສັງຄົມຜ່ານມາແລ້ວ ຫຼື ສ້າງໃໝ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີຈຸດປະສົງຈະສ້າງຕັ້ງເວັບໄຊ, ໜ້າຂ່າວອອນລາຍ (Web page) ເພື່ອບໍລິການສັງຄົມ ຕ້ອງແຈ້ງຈຸດປະສົງ ຂໍອະນຸຍາດເຄື່ອນໄຫວຈາກ ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເພື່ອຄົ້ນຄວ້າພິຈາລະນາຕາມກົດໝາຍ ແລະ ລະບຽບການ;
5. ຄຸ້ມຄອງຕິດຕາມ, ກວດກາ, ຕອບໂຕ້ເນື້ອໃນຂໍ້ມູນຂ່າວສານທີ່ຂັດກັບ ກົດໝາຍສື່ມວນຊົນ, ດຳລັດຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
6. ປະສານງານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງກິດຈະກຳ, ຂະບວນການ ແລະ ໂຄສະນາເຜີຍແຜ່ການນຳໃຊ້ຂໍ້ມູນຂ່າວສານໃຫ້ສອດຄ່ອງ ແລະ ຖືກຕ້ອງເພື່ອໃຫ້ຜູ້ໃຊ້ບໍລິການ ແລະ ສັງຄົມຫຼີກເວັ້ນຜົນກະທົບທາງລົບຈາກການກະທຳ ທີ່ຮູ້ເທົ່າບໍ່ເຖິງການ ແລະ ການເຜີຍແຜ່ຂໍ້ມູນຂ່າວສານທີ່ຂັດກັບລະບຽບກົດໝາຍ;
7. ເຂົ້າຮ່ວມປະຊຸມປຶກສາຫາລື, ໃຫ້ການຮ່ວມມືໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບອາຊະຍາກຳດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.
8. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ**

ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຂະແໜງປ້ອງກັນຄວາມສະຫງົບຮັບຜິດຊອບດັ່ງນີ້:

1. ຮັບແຈ້ງຄວາມ, ຄຳຮ້ອງຟ້ອງ ຫຼື ຄຳສະເໜີເປັນລາຍລັກອັກສອນ ຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ໃນກໍລະນີມີການກະທຳຜິດທີ່ພົວພັນເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ດຳເນີນການສືບສວນ-ສອບສວນ ຕາມຫຼັກການວິຊາສະເພາະ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ;
3. ເກັບກຳ, ກວດກາ ແລະ ຄົ້ນຄ້ວາວິໄຈ ຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ມີລັກສະນະຄຸກຄາມເຖິງຄວາມໝັ້ນຄົງຂອງຊາດ, ຄວາມລັບຂອງຊາດ ແລະ ຄວາມສະຫງົບຂອງສັງຄົມ;
4. ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການຄົ້ນຫາຂໍ້ມູນຫຼັກຖານ ແລະ ທີ່ມາຂອງການກະທຳຜິດທາງລະບົບຄອມພິວເຕີ ຫຼື ຜ່ານລະບົບອິນເຕີເນັດ ແລະ ສື່ສັງຄົມອອນລາຍ ເພື່ອເປັນບ່ອນອີງແກ່ການສືບສວນ-ສອບສວນ;
5. ເຂົ້າຮ່ວມປະຊຸມປຶກສາຫາລື, ໃຫ້ການຮ່ວມມືໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບອາຊະຍາກຳດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງ ພະແນກສຶກສາທິການ ແລະ ກິລາແຂວງ**

1. ເຜີຍແຜ່ນິຕິກຳຕ່າງໆກ່ຽວກັບການຄຸ້ມຄອງການນຳໃຊ້ອິນເຕີເນັດ, ການນຳໃຊ້ສື່ສັງຄົມອອນລາຍ, ຄວາມຮູ້ດ້ານອິນເຕີເນັດ ແລະ ຄວາມປອດໄພໄຊເບີ, ການປ້ອງກັນຂໍ້ມູນ ໃຫ້ແກ່ພະນັກງານ, ຄູ-ອາຈານ, ນັກຮຽນ, ນັກສຶກສາ ພາຍໃນແຂວງ ເພື່ອສົ່ງເສີມໃຫ້ນັກຮຽນ, ນັກສຶກສາ ໄດ້ນຳໃຊ້ອິນເຕີເນັດ, ສື່ສັງຄົມອອນ ລາຍ ໄປໃນທາງທີ່ຖືກຕ້ອງ ແລະ ເໝາະສົມ, ຫຼີກເວັ້ນຈາກຜົນກະທົບທາງລົບຂອງການນຳໃຊ້ອິນເຕີເນັດ;
2. ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ກ່ຽວກັບການພັດທະນາບຸກຄະລາກອນ ແລະ ຫຼັກສູດການຝຶກອົບຮົມດ້ານວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ;
3. ຕິດຕາມ, ກວດກາ, ເກັບກຳສະຖິຕິ ແລະ ສະເໜີພາກສ່ວນກ່ຽວຂ້ອງຊ່ວຍແກ້ໄຂບັນຫາ ການນຳໃຊ້ອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ໃນຂົງເຂດວຽກງານການສຶກສາ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ**

ການຄຸ້ມຄອງວຽກງານຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຂອງຂະແໜງການທີ່ກ່ຽວຂ້ອງເປັນຕົ້ນ: ຂະແໜງການ ປກຊ, ຄະນະໂຄສະນາອົບຮົມ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ອົງການຈັດຕັ້ງອື່ນໆ ມີສິດ ແລະ ໜ້າທີ່ເຂົ້າຮ່ວມ, ໃຫ້ຄວາມຮ່ວມມື, ລາຍງານ ແລະ ສະໜອງຂໍ້ມູນກ່ຽວກັບການຄຸ້ມຄອງວຽກງານດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 29 ອົງການກວດກາ**

ອົງການກວດກາວຽກງານການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຢູ່ແຂວງຄຳມ່ວນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານການນຳໃຊ້ຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ປະກອບມີ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ.

**ມາດຕາ 30 ເນື້ອໃນການການກວດກາ**

ການກວດກາວຽກງານການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີຢູ່ແຂວງຄຳມ່ວນ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ກວດກາຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ພະນັກງານ ທີ່ເຄື່ອນໄຫວວຽກງານການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີຢູ່ແຂວງ;
2. ກວດກາກ່ຽວກັບການຈັດຕັ້ງປະຕິບັດ ບັນດານິຕິກຳ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ;
3. ກວດກາການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ນິຕິກຳກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ.

**ມາດຕາ 31 ຮູບແບບການກວດກາ**

ຮູບແບບການກວດກາການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີຢູ່ແຂວງຄຳມ່ວນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມປົກກະຕິ ແມ່ນການກວດກາຕາມແຜນ ທີ່ມີລັກສະນະກວດກາເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາ ໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;
3. ການກວດກາ ແບບກະທັນຫັນ ແມ່ນການກວດກາເມື່ອເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
4. ໃນການດຳເນີນການກວດກາ ແມ່ນໃຫ້ປະຕິບັດຖືກຕ້ອງຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການລາຍງານ, ການໃຫ້ຄວາມຮ່ວມມື, ການສະໜອງຂໍ້ມູນ ກ່ຽວກັບພຶດຕິກຳທີ່ເປັນອາຊະຍາກຳທາງລະບົບຄອມພິວເຕີ ແລະ ການນຳໃຊ້ສື່ສັງຄົມອອນລາຍໄປໃນທິດທາງທີ່ດີເກີດຜົນປະໂຫຍດຕໍ່ສ່ວນລວມ ຈະໄດ້ຮັບໃບຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ລະເມີດຂໍ້ຫ້າມ ໃນຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ ແລ້ວແຕ່ກໍລະນີໜັກ ຫຼື ເບົາ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມທີ່ລະບຸໄວ້ໃນມາດຕາ 62 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນເຈົ້າການໃນການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

ບັນດາພະແນກການ, ຫ້ອງການ, ອົງການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ນໍາໃຊ້ອິນເຕີເນັດ ຢູ່ແຂວງ ຈົ່ງຮັບຮູ້ ແລະ ນໍາໄປຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ຖືກຕ້ອງ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ ວັນລົງລາຍເຊັນເປັນຕົ້ນໄປ

**ເຈົ້າແຂວງ**

ແຂວງຄໍາມ່ວນ
ເຈົ້າແຂວງ

ວັນໄຊ ພອງສະຫວັນ